# ລາວຍັງຄົງ ເປັນລາວ

ພວກເຮົາຈິ່ງທວນກ່າວໂດຽປ່າງພາກພູມໃຈວ່າ ພຣະບາງຕົນແທ້ແຫ່ງຄວາມເປັນຫລັກຖານຂອງ
ປະຊາຊົນລາວ ຍັງໃຫ້ຄົງເປັນລາວແລະເປັນຕົວຂອງຕົວເອງ ໃນສັງຄົມປະຊາຊາຕແຫ່ງໂລກ
ຕາມວິນຍານ ແຫ່ງການສ້າງອານາຈັກລາວ ຂອງບັນພະບູຣຸດ ໃນທຸກຊົນຊາຕ ຂອງລາວເຮົາທີ່
ສືບຕໍ່ມາປ່າງບໍ່ຂາດສາຽ ແມ່ນບາງຄັ້ງຕອ້ງປະສົບ ກັບຄວາມຍາກລຳບາກ ຕົກເປັນເມືອງຂື້ນຂອງ
ຊາຕອື່ນ ໄດ້ຖືກຍ່ຳຍີບີທາແລະເຜົາຜານທຳລາຽ ປ່າງໂຫດຣ້ັນແຕ່ກໍ່ສາມາດຜ່ານເອົາຕົວລອດມາ
ໄດ້ແລະກໍ່ຍັງໄດ້ມີຊື່ເປັນລາວ ໄວ້ໃນໂລກປ່າງສົມສັກສີ ນີ້ຄືປະວັດສາດອັນມີກຽດແລະຣຸງໂຣດ ຂອງ
ຊົນຊາຕອາ້ຽລາວໄດ້-314-ປີຜ່ານມາ ພຣະບາງເປັນພຣະມະຫາກະສັດແລະເປັນປະມຸກສົງ ໃນຣະ
ບອບສັງຄົມນິຍົມປະຈຸບັນຫຣືແມ່ນໃນຄາວທີ່ປະເທດຊາຕ ຖືກພວກອານານິຄົມເຊັ່ນຝຣັ່ງເສສ ຍີປຸ່ນ
ຍຶດຄອງລາວພຣະບາງກໍ່ຍັງໄດ້ຮັບການພິທັກຮັກສາແລະເຄົາຣົບ ສັກກາຣະບູຊາ ເປັນສວ່ນແຫ່ງ
ຄວາມສຳນຶກຂອງປະຊາຊົນຊາຕລາວ ໄວ້ເປັນດີແລະຍັງໄດ້ປະດິດສະຖານຢູ່ທີ່ນະຄອນຫລວງພຣະ
ບາງໃນພຣະບໍຣົມມະຫາຣາຊວັງໄດ້ເປັນພຣະສັກສິດຍຶດໝຽວໝັ້ນໃນທາງຈິດໃຈຂອງປະຊາຊົນລາວ
ແລະຄຽງຄູ່ກັບພຣະມະຫາກະສັດຕຣອດມາປ່າງດົນນານໄດ້ເຖິງ-621ປີ-ແຕ່,ຄ,ສ,1359-ຫາ-
1979-ຈົນເຖິງວາຣະດິດຖີ ການສລອງອາຍຸພຣະພຸດທະສາສນາ ສອງພັນຫາ້ຮອ້ຽປີ-ຄ,ສ,1957-
ໃນຊາວພຸດທົ່ວໂລກນັ້ນນອກຈາກເປັນສວ່ນຂອງຣັຖບານ ທີ່ຈະສ້າງສະຖານວັດຖູເປັນອະນຸສອນ ທີ່ນະ
ຄອນວຽງຈັນ ມີການສ້າງສາລາພັນຫອ້ງໄວ້ແຕ່ໃນຣະຍະຕໍ່ມາຄະນະນີ້-ໄດ້ມີຄົນລາວ ຊຸດຣັຖບານ
ໄກສອນພົມວິຫານໄດ້ຮື້ຖອນຖິ້ມໝົດແລ້ວສວ່ນມະຫາກູດຕິ ພວກເຂົາກໍ່ບໍ່ໄດ້ສອ້ມແປງກະທັ້ງພຣະຖາດ
ຫລວງເປັນຕົ້ນແລະຕາມແຂວງຕ່າງ ໆ ທັງວັດ-ພຣະເຈົ້າມະຫາຊີວິດ ສີສວ່າງ ທັງສອງພຣະຣາຊ
ບິດາພຣະເຈົ້າແຜ່ນດິນລາວ ກໍ່ຊົງພະປະຣົກແລະໄດ້ປຶກສາກັບພະສັງຄະຣາດແລະເຖຣະຜູ້ໃຫ່ຽຈະ
ສ້າງທໍພະບາງຂື້ນ ເປັນອະນຸສອນໄວ້-ເປັນສວ່ນພິເສດ ທີ່ນະຄອນຫລວງພຣະບາງ ດວ້ຽພະຣາຊາຊັບ
ສວ່ນພຣະອົງແລະຈາກສັດທາ-ຂອງປະຊາຊົນລາວທົ່ວປະເທດ ແຕ່ພະອົງຊົງພະປະຊວນ-ດວ້ຽໂລກ
ລູມາຕິດຊັມ ປ່າງໜັກແລະຊົງສາຣະພາບດວ້ຽພຣະອົງມາຊີ້ນພະຊົນໃນປີ,ພ,ສ,2503-ແລະ,ຄ,ສ,
1960-ລວມພະຊົນໄດ້-75-ພັນສາ ເມື່ອພຣະບາດສົມເດັດພຣະເຈົ້າມະຫາຊີວິດ ສຣີ ສວ່າງວັທນາ
ພຣະຣາຊໂອຣົດຂື້ນຄອງຣາໃນປີ,ຄ,ສ,1960-ຈຶ່ງໄດ້ສືບຕໍ່ມາແລະພຣະເຈົ້າສີສວ່າງວັທນາໄດ້ເປັນ
ພຣະເຈົ້າແຜ່ນດິນລາວອົງສຸດທາ້ຽນັບແຕ່ຂຸນລໍຣາຊໂອຣົດອົງທີ່ນຶ່ງຂອງຂຸນບໍຣົມຊົງມາສ້າງເມືອງ
ຊົວປີ,ຄ,ສ,1200-ພ,ສ,2519-ໄດ້ເປັນເວລານານເຖິງ-1328-ປີໄດ້ມີພຣະມະຫາກະສັດຂື້ນຄອງ
ຣາຊຕໍ່ເນື່ອງກັນມາໄດ້-74-ພຣະອົງນັບວ່ານານທີ່ສຸດໃນໂລກພຣະອົງຍັງໄດ້ນຳຄະນະຣັຖບານແລະ
ປະຊາຊົນລາວທຸກຊົນຊັ້ນດຳເນີນກໍ່ສ້າງ ຫໍພຣະບາງຂື້ນໃນບໍຣິເວນມະຫາຣາຊວັງຫລວງພະບາງ
ທາງທິດຕາວັນອອກແຕ່ບໍ່ສຳເຣັດພຽງແຕ່ວາງຮ່າງ ຍົກໂຄງຂື້ນເທົ່ານັ້ນ ແຕ່ມີການປຽນແປງການ
ປົກຄອງລາວ-ມາເປັນຣະບອບສັງຄົມນິຍົມຄອມມຸນິສແດງ-ໂດຽມີທາ້ວໄກສອນ ພົມວິຫານ

ເປັນນາຍົກຣັຖມົນຕຣີ-ສູພານຸວົງເປັນປະທານປະເທດເມື່ອວັນທີ-21-ທັນວາຄົມ-ຄ,ສ,1975, ພ,ສ,2518-ພຣະເຈົ້າສີ ສວ່າງວັທນາກໍ່ໄດ້ຖືກບີບບັງຄັບ ໃຫ້ລາອອກຈາກຣາຊສົມບັດແລະບັນລັງ ລົງມາເປັນສາມັນຊົນທັມມະດາ-ແລະພວກເຂົາໄດ້ທັບມຈ້າງຍົກເລີກທຸກໆອົງການແລະໄດ້ຈັດຕັ້ງ ສານປະຊາຊົນ ຄືຣະບອບເກົ່າໆ ນັ້ນຕອ້ງລຶບລ້າງຖີ້ມແຕ່ຊັ້ນສູງເຖິງຊັ້ນຕ່ຳແລະໄດ້ຕັ້ແສານປະຊາ ຊົນຂື້ນໃຫ້ມີອຳນາດກັບປະຊາຊົນດວ້ຽສຽງອຳນາດປະຊາຊົນເປັນໃຫ່ຽແຕ່ໃຫ້ຢູ່ໄຕ້ອຳນາດລັດ ຣະ ບອບຄອມມຸນິສວຽດນາມ ຕໍ່ມາອຳນາດໃໝ່ຂອງຄອມມຸນິສກໍ່ໄດ້ໃຊ້ນະໂຍບາຽປຸກຣະດົມນິດສິດນັກ ສຶກສາແລະປະຊາຊົນໃນນະຄອນຫລວງພະບາງ-ເດີນຂະບວນໃຫ້ຣອ້ງອອັມພຣະຣາວັງເພື່ອທັບ ມຈ້າງອຳນາດສັກດີນາສູງສຸດຂອງພຣະມະຫາກະສັດລົງຢ່າງເຖິງຖອງພຣະສັງຄະຣາດລົງມາອີກ ເມື່ອທຸກຄົນຊາບເຊັ້ນນັ້ນແລ້ວ ກໍທະຍອຍຫາທາງຫລົບໜີອອກຈາກຫັ້ນ-ເປັນບຸນຍະກັມອອກຈາກ ວັດໄປໝົດບໍ່ໄດ້-ສວ່ນເດີນຂະບວນນັ້ນວາ່ເປັນ ແລະຢ່າງເຖິງກົກເຖິງຮາກ-ໂດຽຢ່າງຊີ້ນເຊີງສວ່ນ ປະຊາຊົນລາວທຸກຄົນທີ່ຖືກໃຫ້ໄປເດີນຂະບວນ-ພວກເຂົາເຈົ້າກໍ່ສຸດແສນເສົ້າສລົດໃຈແລະບາງຄົນ ກໍ່ມີນ້ຳຕາລົນໄຫລຕົກໃນ ແຕ່ຈຳເປັນຕອ້ງໄດ້ໄປ-ວັນຕໍ່ມານີ້ເຈົ້າໜ້າທີ່ໃນຄະນະຂອງພວກແນວ ລາວ ກໍ່ໄປກາ່ວບອກດວ້ຽປາກວາ່-ຂໍນິມົນພຣະໝຸ່ມເນນນອ້ຍແລະນິສິດນັກສຶກສາພອ້ມປະຊາຊົນ ໃຫ້ໄປຣວມຕົວກັນຢູ່ສຳນັກວັດໃໝ່ສຸວັນນະພູມານາຣາມທີ່ປະທັບຂອງສົມເດັດພຣະສັງຄະຣາດ ຫລັງ ສັນແຜນເສັດແລ້ວທຸກໆຂະບວນການຈັດຕັ້ງ ກໍ່ທະຍອຍກັນມາຣວມຕົວກັນຢູ່ວັດໃໝ່ຕາມນັດໝາຽເມື່ອ ເຈົ້າໜ້າທີ່ເຫັນວາ່ທຸກຊົນຊັ້ນມານາກມາຽແລ້ວ ຜໍສົມຄວນພວກມັນກໍ່ປະກາດໃຫ້ເດີນຂະບວນ-ຣົບ ລ້າງສັກດີນາສູງສຸດ ທາງສາສນາບຸນບາຣະມີອະພິນິຫານແລະບາຣະມີທັມຂອງພຣະອົງສົມເດັດໂດຍ ແທ້ ເພາະທຸກຄົນກໍ່ເຄົາຣົບເລື້ອມໃສ ຕໍ່ພຣະອົງຢ່າງຖວ້ນທົ່ນຢູ່ແລ້ວ-ຕໍ່ມາປະມານວັນທີ-5-ມີນາຄົມ ພ,ສ,2519-ພວກເຈົ້າໜ້າທີ່ຣະບອບໃໝ່ກໍ່ພາກັນສະແດງນະຄອນອີກສາກນຶ່ງເພື່ອໃຫ້ປະຊາຊົນເຂົ້າ ໃຈວາ່ມີເຫດການ-ເຊັນນັ້ນເກີດຂື້ນຈິງ ໆ ຄືຕັ້ງແຕ່-14-00-ນກາງຄືນໄດ້ມີເຈົ້າໜ້າທີ່ຈະເດັ້ມຍິງປືນ ໃຫ່ຽຂື້ນເປັນຈຸດໆລອບນະຄອນຫລວງພຣະບາງຍິງໄປເລື້ອຍໆຈົ່ນໄກ້ສວາ່ງຈັງຢຸດເປັນເວລາຫລາຍ ວັນແລະທະຫານບາງກຸ່ມກໍ່ມາໄລ່ຕອ້ນຍິງກັນ ຢູ່ໃນກາງຕົວເມືອງທັງເອົາເລືອດເປດເລືອດໝູ-ລາດ ຕາມທາງຖນົນໃນເມືອງພວກມັນໄດ້ໂຄສນາວາ່ຄືນນີ້ ໄດ້ຖືກຍິງກັນຕາຍ-ເທົ້ານັ້ນຈັບໄດ້ເທົ້ານີ້-ຕໍ່ມາ ມັນກໍ່ໃຫ້ພວກນັກຂາ່ວຄົນຂອງມັນປະກາດອອກທາງວິທະຍຸກະຈາຍສຽງໃຫ້ປະຊາຊົນຊາບ-ແຕ່ປະຊາ ຊົນສະໃໝນັ້ນກໍ່ເສື່ອເຖິງ-90 % ເປີເຊັນ-ວາ່ເຫດການທີ່ເກີດຂື້ນຈິງ ໆ ແຕ່ຕໍ່ມາກໍ່ຊາບວາ່ເປັນການ ດອກລວງ ຂອງລາວພັກຄອມມຸນິສໂດຽຊີ້ນເຊີງ-ຜົນທີ່ສຸດພຣະເຈົ້າມະຫາຊີວິດກໍ່ຖືກພວກເຂົາດອກ ລວງວາ່ຖາ້ເອົາໄວ້ຫລວງພະບາງ-ຢາ້ນບໍ່ປອດໄພເພາະວາ່ມີນັກປະຕິວັດການກູ້ຊາຕຈະມາແຍ້ງເອົາ ໄປເມືອງໄທແລ້ວພວກມັນກໍ່ເວົ້າກັນວາ່ຕອ້ງທູນເຊີນພຣະອົງໄປປະທັບຢູ່ທີ່ບອ່ນປອດໄພແຜ່ພຣະອົງ ໃນມື້ວັນທີ-11-ມີນາຄົມ,ພ,ສ,2519-ຄ,ສ,1976-ມີເຈົ້າໜ້າທີ່ມາທູນເຊີນ-ຢາ່ງໃຊ້ຣາຊະຊັບວາ່ ຂໍອັງເຊີນໄຕ້ຝາ້ລະອອງທູຣີພຣະບາດສະເດັດຂື້ນໄປປະທັບ-ຢູ່ແຂວງຫົວພັນຊຳເໜືອ ເພື່ອຄວາມຜາສຸກ

ແລະຄວາມປອດໄພ ແຕ່ພຣະອົງພ້ອມກັນດຽວນີ້ເຈົ້າໜ້າທີ່ທະຫານຫລາຽນາຍຂອງພວກແມວ ລາວພາກັນຖືປືນຈັງຫວະແບບອາຣັກຂາ ແບບຄູ່ບັງຄັບໃຫ້ສະເດັດຂຶ້ນຣົດທັງພະອັກຄະມະເຫສີພ້ອມ ພະບໍຣົມວົງສານຸວົງ-7-ພະອົງຂຶ້ນເຄື່ອງບິນແລ້ວເອົາໄປໄວ້ຊໍາເໜືອຕິດກັບຊາຍແດນ ວຽດນາມ ຈົນກະທັ້ງທຸກວັນນີ້ ບໍ່ຊາບວ່າຊາຕາກັມຂອງພຣະອົງຈະຍັງຫຼືບໍ່-ຕໍ່ຈາກນັ້ນມາລາວຄອມມຸນິສຈຶ່ງຄື້ນ ຄ້ືວວິໃຈເບິ່ງແບບເດ້ກົນວ່າຕໍ່ໄປນີ້ໃຜເປັນມິດໃຜເປັນສັດຕຣູພວກເຮົາແລ້ວໃຫ້ພາກັນລົງມືຈັບກຸມ ບຸກຄົນໃນຣະບອບເກົ່າໆຕາມຄໍາຂັວນວ່າໂຄ່ນລົ້ມການປົກຄອງເກົ່າຢ່າງເຖິງກົກເຖິງຮາກແລະຂ້າ ແມວຄິດເກົ່າ ໆ ໃຫ້ໝົດຈາກຜືນແຜ່ນດິນລາວ ສ່ວນພວກເຈົ້າໜ້າທີ່ເກົ່າ ໆ ນັ້ນກໍ່ຫລົງຕົວດວັຽສັກ ດິນາ ນາຍທຶນຂຸນສຶກຈຶ່ງຖືກພວກເຂົາຈັບຫົວແລ້ວເຊີນໄປສໍາມະນາຫຼືເວົ້າກັນວ່າຈັບເຂົ້າຄຸກແລ້ວ ໃຫ້ອອກແຮງງານ ຢ່າງໜັກ ຢູ່ເມືອງສວັນໃນປ່າເປັນນັກໂທດການເມືອງໃນປ່າແລະເອີ້ນວ່າເປັນສະ ເລີຽເສິກ ເຂົາເອົາໄປໄວ້ຢູ່ຕິດກັບຊາຍແດນວຽດນາມ-ຈົນກະທັ້ງທຸກວັນນີ້ແລະຫາຽສາບສູນໄປ ເປັນຈໍານວນຫລາຽກໍ່ມີ ສ່ວນທີ່ຍັງເຫລືອຢູ່ກໍ່ກາຽເປັນຄົນພິບຈ້ພິການໄປແລະເຊື່ອມສະພາບກໍ່ມີ ອັນນີ້ແລ້ວ ພວກລາວພັກຄອມມຸນິສໃນອະດີດເຂົາໄດ້ພາກັນເອີ້ນວ່າພວກໄປຮຽນຍາວນານ-ມາບັດ ນີ້ຈະກ່າວເລື້ອງພຣະບາງຊຶ້ງເປັນພຣະອົງທີ່ມີຄວາມສັກສິດຍິ່ງເປັນທີ່ສັກກາຣະບູຊາຂອງປະຊາ ຊົນລາວ-ມາຊ້ານານດັ່ງກ່າວແລ້ວເຖິງແມ່ນວ່າປະເທດຈະປະສົບວິກິດການຜ່ານມາໃນການລ້ອາ ນານິຄົມຂອງປະເທດມະຫາອໍານາດຫລາຽຄັ້ງຫລາຽຫົນກໍ່ຕາມແຕ່ ພຣະບາງຂອງລາວເຮົາກໍ່ຍັງຢູ່ ຄູ່ຄຽງກັບພຣະມະຫາກະສັດລາວຕຣອດມາແລະເປັນມູນມໍຣະດົກທີ່ຕົກທອດມາຢ່າງຍາວນານແຕ່ ປະວັດສາດຂອງປະຊາຊົນລາວຕຣອດມານມາບັດນີ້ໄດ້ມີລາວຣັຖບານທູນໄກສອນພົມວິຫານໄດ້ອັງ ເຊີນເອົາພຣະບາງເຈົ້າຂອງລາວອອກຈາກພະບໍຣົມມະຫາຣາຊວັງໄປຢ່າງລຶກລັບ-ເມື່ອຕົ້ນປີ ພ,ສ, 2522-ບໍ່ຊາບວ່າເອົາໄປໄວ້ແຫ່ງຫົນຕໍາບົນໃດກະທັ້ງເຖິງທຸກວັນນີ້-ແລ້ວຕໍ່ມາພວກເຂົາເອົາພຣະ ບາງອົງ ຈໍາລອງ-ທີ່ຢູ່ວັດໃໝ່ສູວັນນະພູມານະຣາມ-ເອົາໄປປະດິດສະຖານໄວ້ແທນເພື່ອໃຫ້ປະຊາ ຊົນລາວແລະຊາວຕ່າງປະເທດເຫັນແລະເຂົ້າໃຈວ່າອັນນີ້ເປັນພຣະບາງອົງຈິງໃນການທີ່ເຊີນໄປຢ່າງ ລຶກລັບເຊັ່ນນີ້ອາຈເພື່ອເປັນຄວາມປອດໄພມູນມໍຣະດົກອັນເປັນປະວັດສາດຂອງປະຊາຊົນລາວກໍ່ໄດ້ ຫຼືບາງທີກໍ່ອາຈຫາຽສາບສູນໄປກໍ່ໄດ້ແລ້ວແຕ່ບຸນວາສນາແລະຊາຕາກັມຂອງປະເທດຊາຕສາສນາ ແລະສັດຈະທັມຕອ້ງຍັງຄົງມີພຣະບາງເຈົ້າກໍ່ຄົງ ໄດ້ຮັບການຄຸ້ມຄອງປອ້ງກັນໄດ້ຢ່າງດີແລະຈະໄດ້ ກັບມາເປັນທີ່ເຄົາຣົບສັກກະຣະບູຊາຄູ່ຄຽງກັບພຣະມະຫາກະສັດຂອງປວງປະຊາຊົນລາວອີກຕໍ່ໄປ ສົມຕາມພຣະບໍຣົມ ນິທານຂອງບັນພະບູຣຸດແລະເຈຕນາອັນເປັນມະຫາກຸສົນຂອງປະຊາຊົນລາວທັງ ມວນແລະທຸກຖວັນໜ້າທີ່ສືບທອດປົກປັກຮັກສາປະເທດຊາຕແລະສາສນາດວັຽດີຕຣອດໄປ ອົງສົມ ເດັດ ພຣະສັງຄະຣາດທີ່ເຄີຽເປັນພຣະປະມຸກສົງທາງສາສນາເຖິງແມ່ນວ່າພະອົງທ່ານຈະມີພະຊົນມາ ຍຸໄດ້-88-ພັນສາແລ້ວກໍ່ຍັງໄດ້ສະເດັດຫລົບໜີອອກນອກປະເທດໄປປະເທດອື່ນ ໃນວັນທີ-5-ມີນາ ຄົມ,ພ,ສ,2522-ຄ,ສ,1979-ພຣະອົງຈຶ່ງໄດ້ລະຖິ້ມ

ຄວາມເປັນປະມຸກສົງ

ເພາະລາວພັກຄອມມຸນິສໄດ້ຄົ່ນລົ້ມ -ຣະບອບປະຊາທິປະໄຕ -ແລະສາສນາພຸດທີ່ເຄີຍປົກປັກຮັກສາ
ປະຊາຊົນລາວຕຣອດມາພຣະອົງຈຶ່ງໄດ້ມາຂື້ນພະຊົນອາຍຸຢູ່ທີ່ປະເທດໄທ -ຜູ້ຮວ່ມສາຽເລືອດປະ
ວັດສາດ -ອັນນີ້ເປັນຄະຕິເຕືອນໃຈໃນຄະຕິທັມ -ກັບພີ່ນອ້ງຊາວລາວ ຂໍໃຫ້ພາກັນເບິ່ງຕົວຢ່າງຂອງ
ປະເທດລາວເຮົາແລະປະເທດຂເມນ ວຽດນາມໄຕ້ທີ່ສູນເສັຽປະເທດຊາຕເພາະຜູ້ນໍາແລະຂາຣາຊ
ການທະຫານຕໍາຣວດພໍ່ຄ້າປະຊາຊົນ -ສວ່ນຫລາຽທີ່ຫລົງຕົວຢູ່ດວ້ຽສັກດີນານາຍທຶນ -ຂູດຮີດ ໂດຽບໍ່
ຮູ້ຈັກພໍ່ບໍ່ຮູ້ຈັກແມ່ -ມີແຕ່ປາກລໍ້າຣວຽສວຽ ໂອກາດຍາດອໍານາດມາຢູ່ນໍາຕົວຄົນດຽວ -ອັນນີ້ແລ້ວຊຶ່ງ
ເປັນເຫດເປັນປັດໃຈໃຫ້ບ້ານແຕກສະແດກຂາດ ດັ່ງທີ່ເຫັນຢູ່ນີ້ແລ້ວ -ອັນວາ່ສາສສີນນີ້ ພາຕົວຕົກ
ຕໍ່າກໍ່ມີລາງເທື່ອໄດ້ຂາ້ເຈົ້າເອົາຂອງນັ້ນ -ບຸນກວາ້ງບາບເຕັງ -ບໍ່ໄດ້ຫລີງເບິ່ງກໍ້າ ຜູ້ທີ່ເພີ່ນມີຄຸນເຈົ້າ
ເອີຽ -ບຽດບຽນບິດານານດາ -ບາບກັມສີ້ນໍາກົ້ນ ເນນະຄຸນຕົນເຈົ້າພຣະອາຈານສອນສັ່ງ -ບາບແດ່ນ
ຕອ້ງເວນກຮ້ວຈຸມຈົມ ເຫັນວາ່ຕົນຈົບເຜດຜຮັ້ນ -ດວ້ຽອໍານາດອາແຂງຂນາດຄັງວາ່ງືກງາກເງີ້ນ
ຟັນຂາ້ໝູ່ປະຊາ -ຊາຕທີ່ຄົນຊາຕນີ້ລາງມີຈົບເຜດຈິງແລ້ວ -ແມ່ນວ່າຮູ້ຍິ່ງລໍ້າອໍາໄວ້ກໍ່ຈຶ່ງດີເຈົ້າເອີຍ

ຂໍຈະເອີນພອນເມດຕາມາຍັງ ທາ່ນພີ່ນອ້ງລູກຫລານຊາວລາວທຸກທາ່ນອະຕະມາ -ຮູ້ສຶກເປັນຫວ່ງ
ເປັນໃຍ ແລະຄິດຮອດຄິດເຖິງລູກລາວຫລານລາວທຸກ ໆ ຄົນທີ່ໄດ້ພັດພາກຈາກຮົ້ວໄຮ່ນາສວນ ເຮືອນ
ຊານແລະບາ້ນເກີດເມືອງນອນອັນເປັນທີ່ຮັກແລະຫວງແຫນຜືນແຜ່ນດິນປະເທດຂອງຕົນ ທັງນີ້ກໍ່
ເພື່ອຄວາມຢູ່ລອດ ຂອງແຕ່ຣະຄົນແລະການຈໍາໃຈຈໍາຈາກພາກບາ້ນເກີດເມືອງນອນ -ລູກຫລານລາວ
ເອີຽບາ້ນທີ່ເຮົາເກີດຢູ່ ອູ່ເຄີຽນອນໝອນເຄີຽໝູນແລະໄດ້ເຄີຽຢູ່ຮວ່ມກັນສາ້ງສົມມາເປັນສິ່ງທີ່ທຸກ
ຄົນເຂົ້າໃຈ ຊາບສິ່ງດີໃນບາ້ນເມືອງນອນຂອງຕົນແລະຜືນແຜ່ນດິນທຸກໆຕຣາງນີ້ເປັນສົມບັດສວ່ນ
ລວມທີ່ບັນພະບູຣຸດເຮົາໄດ້ສາ້ງໄວ້ຊຶ່ງພວກເຮົາທຸກຄົນມີໜາ້ທີ່ຮວ່ມກັນປົກປັກຮັກສາສົມບັດນັ້ນເພື່ອ
ສືບຕໍ່ເຈຕນາຣົມຂອງທາ່ນໃວ້ ເປັນການສະແດງກະຕັນຍູ ກະຕະເວທີຕໍ່ວິນຍານຂອງຜູ້ທີ່ມີຄຸນແກ່
ບາ້ນເມືອງ -ອັນເປັນການກະທໍາທີ່ທາງພຸທສາສນາ -ຍົກຍອ້ງສັນຣະເສີນເວລານີ້ບາ້ນເມືອງເວລາ
ນີ້ບາ້ນເມືອງຂອງພວກເຮົາໄດ້ມີການປຽ່ນແປງໃນວິທີຊີວິດທີ່ພວກເຮົາເຄີຽດໍາເນີນມາຈິ່ນເປັນເຫດ
ໃຫ້ລູກຫລານໄດ້ຍາ້ຍແຍກໜີມາຈາກພໍ່ແມ່ຍາດພີ່ນອ້ງແຕກກະຈັດກະຈາ່ຍຍາ້ຍອອກໄປຢູ່ຄົນຣະທີ່
ຣະທາງໜີອອກຈາກບາ້ນເກີດເມືອງນອນຂອງຕົນເມື່ອໄດ້ພົບເຫັນສະພາບຕົວຈິງຈາກລູກຫລານຜູ້
ອົພຍົບຫລົບໄພໜີມາອາໃສຢູ່ຕາມສຸນຕາ່ງໆໃນປະເທດໄທ ແລະປະເທດທີສາມ ແລ້ວເປັນໜາ້ສລົດ
ສັງເວດເວທະນາສຸດແສນຈະພັນຣະນາໄດ້ ລູກຫລານທີ່ຮັກແພງທັງຫລາຽທີ່ໄດ້ອົພຍົບຮົບໄພມາຢູ່ປະ
ເທດທີສາມຖາ້ພໍຕັ້ງຕົວທັນໃຈໄດ້ກໍ່ຂໍໃຫ້ພາກັນ ຫວນຣະລຶກ ນຶກເຖິງເພືອນຮວ່ມຊາຕທີ່ຍັງຕົກທຸກໄດ້
ຍາກຢູ່ໃນປະເທດເນື່ອງຈາກຄວາມປຽ່ນແປງ ອັນເກີດຂື້ນໃນບາ້ນເມືອງຂອງພວກເຮົາສົມຄວນທີ່
ພວກເຮົາທຸກຄົນ ທຸກຄອບຄົວ ທຸກສະມາຄົມທີ່ມີຖານະພໍສົມຄວນຈະໄດ້ສະແດງຄວາມເຫັນໃຈຄວາມ
ຮັກແພງ ຄວາມອິນດູກຸນາເມດຕາສົງສານແລ້ວໃຫ້ຊວ່ຍເຫລືອຊຶ່ງກັນແລະກັນ
ຕາມສົມຄວນແກ່ຖານະຂອງຕົນ -ອັຕມາພຣະສັງຄະ
ຣາຊເຈົ້າໄດ້ຮູ້ສຶກເປັນຫວ່ງແລະຄິດ

ເຖິງລູກຫລານທຸກ ໆ ຄົນ ຢາກຈະມາຢຽ້ມຢາມດວ້ຽຕົນເອງແຕ່ສະພາບການບໍ່ອຳນວຽ ຈຶ່ງຂໍຝາກ
ຄວາມຄິດຮອດຄິດເຖິງແລະແຜ່ເມດຕາທັມ-ມາຍັງພີ່ນອ້ງລາວທັງຊາຕ ຈົ່ງຫວນຄິດຄືນຫລັງແມ່ວ່າ
ປະເທດລາວຂອງເຮົາແຕ່ກອ່ນນັ້ນ ຍັງມີຊື່ວ່າເຈົ້າເຊື້ອໜໍ່ເມວກະສັດ ພຣະເຈົ້າຟ້າງຸ່ມມາຄອງ
ລາວໄດ້ຮຸ່ງເຮືອງຈະເຣີນແລ້ວ ເພາວໄດ້ມາທັບມ້າງ ເມືອງລາວຈົ່ນເປັນຝຸ່ນ ແຜ່ນດິນມູ່ນອູ່ຍ
ປຸຍລາວຍວັຽເຂົ້າໃສ່ໄທ ໄທກໍ່ບໍ່ເຫັນດີຊ້ຳເພາະ ລາວນຳຂ້າລ້າງໂຄດກັນເດໄກສອນມາທັບ
ມ້າງເພບ້ານໄດ້ຫາ່ງກັນ ສູພານຸວົງກໍ່ພອ້ມນຳຂ້າໜໍ່ກະສັດ ຍັງບໍ່ແລ້ວທໍ່ນັ້ນພຣະຍານໍ່ນາມ
ວຽງສຽງປະຊາຊົນລາວ ໂຣ່ດັ່ງໄປກອ້ງ ປັຕພິຍາວຍາ່ນເຖິງພະຍານາກນ້ຳຊິມາຂື້ນສອ່ຽ
ຊູ ຍັງຊິຈັບເອົາຫ້ວຄຳໄຕໄປສູ້ຂາ່ວ ເອົາກະທັ້ງໝູ່ເພື້ອນໝູຮັກທັງພູມີ ສີສະຫວາດທັງ
7-ຄົນໃຫ້ຈຸ່ມຈົມໄປເບີດສຽ້ງ ເພື່ອໃຫ້ວຽງຈັນແຈ້ງແສງຕາເວັນໄດ້ຫລິງສອ່ງ ຊາວລາວ
ພວກພີ່ນອ້ງ ໃຫ້ໂງໂງ້ງເຂົ້າໃສ່ກັນ ຍັງບໍ່ແລ້ວທໍ່ນັ້ນພຣະຍານາກນາຄາເພີ່ນຊິໄປນຳ
ເອົາມາໜໍ່ພຣະບາງມູນເຄົ້າເພື່ອໃຫ້ລາວເຫັນແຈ້ງເມວທາງໃສສອ່ງ ມອງໄປທາງ
ທົ່ວພື້ນຈະເຣີນໄດ້ດັ່ງເດີມສາມສິບປີໄດ້ພາ່ນພົ້ນ ຄົນລາວດັ່ງໃຫລໜີ້ ຜູ້ຢາກກັບຍືນ
ເມືອຢ້ານແຕ່ເພາວນຳຂ້າເພາະວ່າພວກເມວລາວເປັນບຳ້ ໄປຟັງຄວາມເພາວສັບ
ສົ່ມັນໃຫ້ພາກັນຂ້າພໍ່ແມ່ພີ່ນອ້ງຂອງຕົນນັ້ນກໍ່ເດົ່າທຳນະວັງເລີກັມຊິມານຳກົ້ນ
ພວກຄົນລາວຂາຽຊາດເພາະວ່າພວກນັກປາດມູນຊາຕເຊື້ອໄປນຳເວົ້າສູ່ຜີ
ພອ້ມທັງຜີຫລັກບ້ານຫລັກເມືອງມູນເກົ່າເດົ່າໄປເຖິງສູ່ພື້ນທາງໄຕ້ລີ່ຜີ
ເພີ່ນຊິມານຳຄືົ້ນເອົາຄົນລາວຂາຽຊາຕໄປທຳຄວາມຊົ່ວຮ້າຽໃຫ້
ຫາຽຊິ້ນຈາກລາວ   ໂຊກດີປີໃໝ່ເຂົ້າໄປໃນປີ-07-ໃຫ້ຢູ່ດີສເມີ
ດາ້ມຊາວລາວທຸກຊົນຊັ້ນໃຫ້ມີໄຊຊະນະເລີດ ປະເສີດທຸກໝູ່
ເຄົ້າລາວໄດ້ຕາ່ວຍືນ

ຄັ້ງວັນທີ-25-5-00-ຈາກສູນກາງ ສັນພູໝອກ ທີ່ນະຄອນວຽງຈັນ

ໃນນາມພັກປະຊາຊົນອິສຣະ